ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----⁂⁂✧✧✧⁂⁂-----

ສໍານັກງານນາຍົກລັດຖະມົນຕີ

ເລກທີ: 333 /ນຍ

ນະຄອນຫລວງວຽງຈັນ, ວັນທີ 19.07.2010

# ດໍາລັດ
# ວ່າດ້ວຍປ່າປ້ອງກັນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງໃໝ່ ເລກທີ່ 02/ ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ່ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0061/ກປ, ລົງວັນທີ 06/07/2010.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດໍາລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫລັກການ, ລະບຽບການ ແລະມາດຕະການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນໍາໃຊ້ ປ່າປ້ອງກັນແບບຍືນຍົງ, ແນໃສ່ເຮັດໃຫ້ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ມີຄວາມອຸດົມສົມບູນ ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ, ຮັກສາແຫລ່ງນໍ້າ, ປ້ອງກັນການເຊາະເຈື່ອນ ແລະຮັກສາຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ລວມທັງການຟື້ນຟູບູລະນະ, ການຊຸກຍູ້, ຕິດຕາມ, ກວດກາ ແລະການປະເມີນຜົນການຈັດຕັ້ງປະຕິບັດ ເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ແລະການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2. ປ່າປ້ອງກັນ**

ປ່າປ້ອງກັນ ຂອງ ສປປ ລາວ ແມ່ນປ່າໄມ້ ແລະທີ່ດິນປ່າໄມ້ ທີ່ໄດ້ກຳນົດໄວ້ຢູ່ເຂດຍອດນ້ຳ, ແຫລ່ງນ້ຳ, ເຂດປ່າໂຄກ, ບໍລິເວນປ່າແຄມນ້ຳ, ປ່າແຄມທາງ, ລວມທັງປ່າໄມ້ທີ່ມີຢູ່ໃນ ແລະປ່າອ້ອມຕົວເມືອງ, ເທດສະບານ ຫລືຊານເມືອງ, ປ່າສັກສິດ ແລະປ່າຊ້າຂອງບ້ານ. ປ່າປ້ອງກັນມີເນື້ອທີ່ທັງໝົດ 8.200.000ເຮັກຕາ (ແປດລ້ານສອງແສນເຮັກຕາ) ຊຶ່ງໄດ້ກຳນົດໄວ້ ເພື່ອຮັກສາແຫລ່ງນ້ຳ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ປ້ອງກັນການເຊາະເຈື່ອນຂອງດິນ, ປ້ອງກັນໄພທຳມະຊາດ, ນຳໃຊ້ເປັນເຂດຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະອື່ນໆ ຕາມທີ່ໄດ້ຈັດສັນ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຂດປ່າຍອດນ້ຳ** ໝາຍເຖິງເນື້ອທີ່ປ່າໄມ້ ແລະທີ່ດິນປ່າໄມ້ ຊຶ່ງເປັນເຂດຕົ້ນກຳເນີດ ຂອງສາຍນ້ຳທີ່ນອນຢູ່ໃນເຂດອ່າງຮັບນ້ຳ ຫລື ອ່າງໂຕ່ງ;
2. **ແຫລ່ງນ້ຳ**ໝາຍເຖິງບໍ່ນ້ຳ, ສະຖານທີ່ບ່ອນທີ່ມີການເຕົ້າໂຮມ, ພັກຕົວ ຫລືເຄື່ອນໄຫລແບບຖາວອນຫລືຊົ່ວຄາວ ຂອງນ້ຳທຳມະຊາດ ທີ່ມີຢູ່ເທິງໜ້າດິນ, ໃຕ້ດິນ ແລະໃນອາກາດ;
3. **ອ່າງຮັບນ້ຳຫລືອ່າງໂຕ່ງ** ໝາຍເຖິງຂອບເຂດເນື້ອທີ່ປ່າໄມ້ ແລະເນື້ອທີ່ດິນທຸກຕອນ ຕັ້ງແຕ່ຍອດນ້ຳຈົນຮອດ ປາກນ້ຳ, ຕັ້ງແຕ່ ບ່ອນທີ່ມີສັນປັນນ້ຳ ແລະບ່ອນທີ່ເມັດຝົນຕົກລົງມາ ໄຫລໂຮມກັນເຂົ້າເປັນລະບົບແຫລ່ງນ້ຳ;
4. **ອ່າງເກັບນ້ຳ** ໝາຍເຖິງ ບ່ອນເກັບກັກນ້ຳ ເພື່ອຈຸດປະສົງການຊົນລະປະທານ, ການປະມົງ, ເພື່ອບໍລິໂພກ, ອຸປະໂພກ, ຜະລິດພະລັງງານໄຟຟ້າ ແລະການທ່ອງທ່ຽວ;
5. **ການວາງແຜນຈັດສັນປ່າປ້ອງກັນ** ໝາຍເຖິງການກຳນົດພື້ນທີ່ປ່າປ້ອງກັນ ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ຈາກ ການສຳຫລວດຕົວຈິງ;
6. **ການຄຸ້ມຄອງ** ໝາຍເຖິງການດຳເນີນກິດຈະການກ່ຽວກັບປ່າໄມ້ ເຊັ່ນ: ການສຳຫລວດ, ການວາງແຜນຈັດສັນ, ການຄົ້ນຄວ້າທົດລອງ,ການນຳໃຊ້ຜະລິດຕະພົນຈາກປ່າໄມ້ຕາມແຜນຈັດສັນ;
7. **ການຟື້ນຟູ** ໝາຍເຖິງການປົກປັກຮັກສາປ່າໄມ້ ແລະທີ່ດິນປ່າໄມ້ ທີ່ຢູ່ໃນສະພາບເຊື່ອມໂຊມທີ່ໄດ້ຈັດແບ່ງໄວ້ ເພື່ອບູລະນະໃຫ້ກາຍເປັນປ່າໄມ້ທຳມະຊາດທີ່ສົມບູນຄືນ ໂດຍນຳໃຊ້ເຕັກນິກ ທີ່ເໝາະສົມ ຕາມແຕ່ລະກໍລະນີຂອງພື້ນທີ່;
8. **ການປົກປັກຮັກສາ** ໝາຍເຖິງການດຳເນີນກິດຈະການຕ່າງໆ ກ່ຽວກັບປ່າໄມ້ ເພື່ອການຮັກສາແຫລ່ງນ້ຳ, ປ້ອງກັນການເຊາະເຈື່ອນ ແລະຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະອື່ນໆ;
9. **ການພັດທະນາ** ໝາຍເຖິງການປູກ ແລະການຟື້ນຟູປ່າໄມ້ ແລະທີ່ດິນປ່າໄມ້ຊຸດໂຊມ, ການປັບແປງທີ່ດິນຄືນ ພາຍຫລັງການຂຸດຄົ້ນແຮ່ທາດ ໃນເຂດປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ໃຫ້ກາຍເປັນປ່າໄມ້ທີ່ອຸດົມສົມບູນຄືນ ໂດຍນຳໃຊ້ຊະນິດ ພັນໄມ້ພື້ນເມືອງ ຫຼືພັນໄມ້ ທີ່ເກີດມີຢູ່ໃນທ້ອງຖິ່ນຫລືເຂດດັ່ງກ່າວ ປູກຄຸມໜ້າດິນ, ປູກເສີມ ຫລືຟື້ນຟູຕາມທຳມະຊາດ;

10. **ປ່າແຄມທາງ** ໝາຍເຖິງປ່າໄມ້ທີ່ກຳນົດໄວ້ ເພື່ອປ້ອງກັນການເຊາະເຈື່ອນຂອງດິນແຄມທາງ, ຮັກສາລະບົບນິເວດວິທະຍາປ່າໄມ້ຕາມແຄມທາງ ລວມທັງປ່າໄມ້ທີ່ມີຢູ່ໃນເຂດສະຫງວນຂອງທາງ ຊຶ່ງນັບແຕ່ແຄມທາງອອກໄປເບື້ອງລະຢ່າງໜ້ອຍ 50 ແມັດ(ຫ້າສິບແມັດ) ຂຶ້ນໄປ;
11. **ປ່າແຄມນ້ຳ** ໝາຍເຖິງປ່າໄມ້ ທີ່ກຳນົດໄວ້ ຕາມແຄມນ້ຳ, ຫວ້ຍ, ຮ່ອງ, ໜອງບຶງ ຊຶ່ງມີລັກສະນະສະເພາະທາງດ້ານລະບົບນິເວດຂອງປ່າໄມ້, ປ້ອງກັນການສະລ້າງ, ການກັດເຊາະດິນແຄມນ້ຳ, ຫຼຸດຜ່ອນໄຫຼບ່າຂອງນ້ຳ ແລະການຕະກອນ ລົງໃສ່ແມ່ນ້ຳ, ອ່າງເກັບນ້ຳ ຊຶ່ງນັບແຕ່ແຄມນ້ຳອອກໄປ ເບື້ອງລະຢ່າງໜ້ອຍ 50 ແມັດ (ຫ້າສິບແມັດ) ຂຶ້ນໄປ;
12. **ປ່າໂຄກ** ໝາຍເຖິງປ່າໄມ້ທຳມະຊາດທີ່ບໍ່ຕຶບໜາ ແລະມີລະບົບນິເວດປ່າໄມ້ ສະເພາະຕົວ; ຮັກສານ້ຳໃຕ້ດິນ, ຊັ້ນດິນຕື້ນ ແລະມີຫີນດານຕາມໜ້າດິນ. ຊະນິດພັນໄມ້ທີ່ເກີດຂຶ້ນ ສ່ວນໃຫຍ່ເປັນຊະນິດພັນໄມ້ ທີ່ມີເປືອກໜາ, ລຳຕົ້ນບໍ່ໃຫຍ່ ຊຶ່ງມີຄວາມທົນທານຕໍ່ຄວາມແຫ້ງແລ້ງ ແລະໄຟປ່າ, ນອກຈາກນັ້ນ ກໍຍັງເປັນຄັງ ອາຫານ, ຢາປົວພະຍາດ ແລະອື່ນໆ ຂອງປະຊາຊົນ;
13. **ປ່າປ້ອງກັນຊາຍແດນ** ໝາຍເຖິງປ່າໄມ້ ທີ່ກຳນົດໄວ້ຢູ່ລຽບຕາມຊາຍແດນລະຫ່ວາງປະເທດ ຊຶ່ງນັບເອົາຈາກຊາຍແດນເຂົ້າມາ ຢ່າງໜ້ອຍ 05 ກິໂລແມັດ (ຫ້າ ກິໂລແມັດ);
14. **ປ່າຢູ່ໃນ ແລະອ້ອມຕົວເມືອງ** ໝາຍເຖິງປ່າໄມ້ທີ່ເກີດຂຶ້ນຕາມທຳມະຊາດ ຫລື ປ່າທີ່ໄດ້ປູກໃຫ້ເປັນເນື້ອທີ່ປ່າໄມ້ ແລະໄດ້ກຳນົດ ເປັນປ່າປ້ອງກັນ ເພື່ອຈຸດປະສົງ ປ້ອງກັນມົນລະພິດທາງອາກາດໃນຕົວເມືອງ, ປ້ອງກັນໄພພິບັດທາງທຳມະຊາດ, ການສຶກສາຄົ້ນຄ້ວາ, ການພັກຜ່ອນ ແລະການທ່ອງທ່ຽວທາງທຳມະຊາດ;
15. **ເຂດຫວງຫ້າມເດັດຂາດ** ໝາຍເຖິງເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ທີ່ໄດ້ຈັດສັນ, ແບ່ງຂອບເຂດສະເພາະ ຊຶ່ງມີຄວາມຄ້ອຍຊັນສູງກວ່າ 35ອົງສາ, ເຂດຕົ້ນກຳເນີດຂອງແມ່ນ້ຳ, ປ່າລຽບແຄມນ້ຳ, ແຄມທາງ, ເຂດທີ່ມີຄວາມສ່ຽງສູງຕໍ່ການເຊາະເຈື່ອນ,ປ່າໄມ້ລຽບຕາມຊາຍແດນລະຫວ່າງປະເທດ. ເຂດດັ່ງກ່າວຈະກວມເອົາສາຍນ້ຳ, ພູ, ຜາ, ປ່າໄມ້ທຳມະຊາດ, ພືດພັນນາໆຊະນິດ, ຮ່ອງຮອຍປະຫວັດສາດ ແລະວັດທະນະທຳ ລວມທັງ ສິ່ງທີ່ມີຊີວິດ ແລະບໍ່ມີຊີວິດ;
16. **ເຂດຄຸ້ມຄອງນຳໃຊ້** ໝາຍເຖິງເຂດປ່າໄມ້ ແລະທີ່ດິນປ່າໄມ້ ທີ່ຢູ່ໃນພື້ນທີ່ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ຊຶ່ງໄດ້ຈັດແບ່ງ ແລະກຳນົດໄວ້ ເພື່ອໃຫ້ປະຊາຊົນທີ່ອາໄສ ແລະດຳລົງຊີວິດຢູ່ໃນເຂດນັ້ນໄດ້ນຳໃຊ້ປ່າໄມ້ ແລະຜະລິດຕະພັນປ່າໄມ້ແບບຍືນຍົງຕາມປະເພນີ ໂດຍບໍ່ໃຫ້ມີຜົນກະທົບຕໍ່ໂຄງສ້າງທາງທຳມະຊາດຂອງປ່າໄມ້. ການນຳໃຊ້ປ່າໄມ້ ແລະຜະລິດຕະພັນປ່າໄມ້ ໃນເຂດທີ່ຈັດສັນໃຫ້ເທົ່ານັ້ນ ຊຶ່ງປະກອບມີ: ປ່າຊົມໃຊ້, ປ່າປ້ອງກັນ, ປ່າສັກສິດ, ປ່າຊ້າຂອງບ້ານ ແລະອື່ນໆ;
17. **ການຫັນປ່ຽນປ່າປ້ອງກັນ** ໝາຍເຖິງການປ່ຽນແປງປ່າໄມ້ ແລະທີ່ດິນປ່າໄມ້ ໃນເຂດປ່າປ້ອງກັນໄປນຳໃຊ້ເພື່ອຈຸດປະສົງອື່ນໆ.

### ມາດຕາ 4. ນະໂຍບາຍກ່ຽວກັບປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ລັດ ມີນະໂຍບາຍລົງທຶນໃສ່ການຄຸ້ມຄອງ, ການປົກປັກຮັກສາ, ພັດທະນາ, ຟື້ນຟູບູລະນະປ່າໄມ້ ທຳມະຊາດ ແລະ ປູກໄມ້ ເພື່ອປົກປັກຮັກສາສິ່ງແວດລ້ອມ ໃນເຂດທີ່ດິນປ່າປ້ອງກັນ ໂດຍຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ້າງພື້ນຖານວັດຖຸເຕັກນິກ ເພື່ອປົກປັກຮັກສາເຂດປ່າຍອດນ້ຳ, ປ່າແຫລ່ງນ້ຳ, ຄວາມຫລາກຫລາຍທາງດ້ານຊີວະນາໆພັນ ແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ລວມທັງການຈັດສັນອາຊີບຄົງທີ່.

ລັດ ສົ່ງເສີມໃຫ້ບຸກຄົນ, ຄອບຄົວ ແລະການຈັດຕັ້ງ ຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູບູລະນະປ່າໄມ້ ແລະທີ່ດິນປ່າໄມ້, ປູກໄມ້ ໃນເຂດປ່າປ້ອງກັນ ດ້ວຍຊະນິດພັນໄມ້ພື້ນເມືອງ ຫລືຊະນິດພັນໄມ້ທີ່ມີໃນທ້ອງຖິ່ນເປັນຕົ້ນຕໍ ຕາມລະບຽບການ.

ລັດ ສົ່ງເສີມໃຫ້ ມີການນຳໃຊ້ປ່າປ້ອງກັນ ໂດຍທາງອ້ອມເຊັ່ນ: ເປັນແຫລ່ງທ່ອງທ່ຽວທຳມະຊາດ, ສະຖານທີ່ພັກຜ່ອນ, ບ່ອນຄົ້ນຄວ້າທົດລອງ, ຕະຫລາດກາກບອນ ແລະອື່ນໆ ທີ່ບໍ່ກະທົບເຖິງໂຄງສ້າງຂອງປ່າໄມ້ ຢູ່ໃນເຂດທີ່ໄດ້ຈັດສັນໃຫ້ ຕາມລະບຽບກົດໝາຍ.

### ມາດຕາ 5. ຫລັກການ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໃຫ້ປະຕິບັດຕາມຫລັກການຕົ້ນຕໍ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງປ່າປ້ອງກັນແລະທີ່ດິນປ່າປ້ອງກັນຢ່າງລວມສູນແລະເປັນເອກະພາບ ໃນທົ່ວປະເທດ;
2. ຮັບປະກັນການຄຸ້ມຄອງປ່າປ້ອງກັນ ໃຫ້ສອດຄ່ອງກັບ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ແຜນຍຸດທະສາດປ່າໄມ້, ແຜນແມ່ບົດ ແລະແຜນການນຳໃຊ້ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
3. ຮັບປະກັນການປົກປັກຮັກສາປ່າປ້ອງກັນ, ປ່າຍອດນ້ຳ, ປ່າແຫລ່ງນ້ຳ, ຊີວະນາໆພັນ ແລະສິ່ງແວດລ້ອມ ໃຫ້ອຸດົມສົມບູນ ດ້ວຍການເຂົ້າຮ່ວມຂອງປະຊາຊົນ;
4. ຮັບປະກັນການພັດທະນາປ່າປ້ອງກັນ ດ້ວຍການຟື້ນຟູບູລະນະ, ປັບແປງດິນຄືນ, ປູກໄມ້, ປັບປຸງຄຸນນະພາບຂອງດິນ ໃຫ້ອຸດົມສົມບູນ ແລະສົມດູນກັບລະບົບນິເວດຂອງປ່າໄມ້;
5. ຮັບປະກັນ ຜົນປະໂຫຍດລວມຂອງລັດ, ການຈັດຕັ້ງ, ນິຕິບຸກຄົນ ແລະບຸກຄົນ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາ ຕາມລະບຽບກົດໝາຍ;
6. ຮັບປະກັນ ການນຳໃຊ້ປ່າປ້ອງກັນ ຕາມແຜນຈັດສັນແບບຍືນຍົງ ມີປະສິດທິຜົນສູງ ແລະບໍ່ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະໂຄງສ້າງຂອງປ່າໄມ້;
7. ສົມທົບການຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ຂອງ ສປປ ລາວ ກັບພາກພື້ນ ແລະສາກົນ.

# ໝວດທີ II
## ການກຳນົດເຂດ, ການຮັບຮອງ ແລະປະກາດເຂດປ່າປ້ອງກັນ

**ມາດຕາ 6. ການກຳນົດເຂດ ແລະລະດັບປ່າປ້ອງກັນ**

ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ຂອງ ສ ປ ປ ລາວ ໄດ້ກຳນົດ, ຈັດສັນ ແລະແບ່ງອອກເປັນ ສອງເຂດ ຄື: ເຂດຫວງຫ້າມເດັດຂາດ ແລະເຂດຄຸ້ມຄອງນຳໃຊ້. ການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສອງເຂດປ່າປ້ອງກັນດັ່ງກ່າວ ໃຫ້ປະຕິບັດຕາມ ມາດຕາ 23, 59 ແລະ ມາດຕາ 82 ຂອງ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ່ 06/ສພຊ, ລົງວັນທີ 24 ທັນວາ 2007 ຢ່າງເຂັ້ມງວດ.

ປ່າປ້ອງກັນ ຢູ່ໃນ ສປປ ລາວ ໄດ້ແບ່ງອອກເປັນ ສີ່ລະດັບ ຄື:

1. ປ່າປ້ອງກັນ ລະດັບຊາດ;
2. ປ່າປ້ອງກັນ ລະດັບແຂວງ, ນະຄອນ;
3. ປ່າປ້ອງກັນ ລະດັບເມືອງ, ເທດສະບານ;
4. ປ່າປ້ອງກັນ ລະດັບບ້ານ.

**ມາດຕາ 7. ການຈັດແບ່ງເຂດ ໃນປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ**

ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໄດ້ຈັດແບ່ງເປັນເຂດຫວງຫ້າມເດັດຂາດ ແລະເຂດຄຸ້ມຄອງ ການນຳໃຊ້

ເຂດຫວງຫ້າມເດັດຂາດ ແມ່ນເຂດປ່າໄມ້ ແລະທີ່ດິນປ່າໄມ້ທີ່ມີຄວາມຄ້ອຍຊັນສູງກວ່າ 35 ອົງສາ, ເຂດຕົ້ນກຳເນີດຂອງສາຍນ້ຳ, ປ່າລຽບຊາຍແດນລະຫວ່າງປະເທດ ປ່າລຽບແຄມນ້ຳ, ປ່າແຄມທາງ ແລະເຂດອື່ນໆ ທີ່ມີຄວາມສ່ຽງສູງຕໍ່ສິ່ງແວດລ້ອມ.ໃນເຂດນີ້ຕ້ອງໄດ້ປົກປັກຮັກສາຢ່າງເຂັ້ມງວດ ແລະບໍ່ອະນຸຍາດໃຫ້ດຳເນີນກິດຈະການຕ່າງໆ ເຊັ່ນ: ການຖາງປ່າເຮັດໄຮ່, ສວນ, ຕັດ, ທຳລາຍ, ຈູດເຜົາ, ເຄື່ອນຍ້າຍຕົ້ນໄມ້, ຕັດໄມ້ຟືນ, ເອົາສັດເຂົ້າໄປລ້ຽງ, ຕັ້ງບ້ານເຮືອນ, ກໍ່ສ້າງກິດຈະການອື່ນໆ ນັບທັງການຂຸດຄົ້ນດິນ, ຫີນ, ບໍ່ແຮ່ ແລະເກັບກູ້ເຄື່ອງປ່າຂອງດົງ.

ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໄດ້ຈັດແບ່ງເປັນເຂດຄຸ້ມຄອງການນຳໃຊ້ ຊຶ່ງແມ່ນເຂດປ່າໄມ້ ທີ່ບໍ່ມີຜົນກະທົບ ຕໍ່ສິ່ງແວດລ້ອມ ແລະໂຄງສ້າງຂອງປ່າໄມ້ ໃນເຂດນີ້ຕ້ອງໄດ້ປົກປັກຮັກສາຄືກັບ ເຂດຫວງຫ້າມເດັດຂາດ ແຕ່ອະນຸຍາດໃຫ້ປະຊາຊົນນຳໃຊ້ໄມ້ ແລະຜະລິດຕະພົນປ່າໄມ້ ຕາມແຜນຈັດສັນ.

**ມາດຕາ 8. ມາດຕະຖານ ປ່າປ້ອງກັນ**

ເນື້ອທີ່ປ່າໄມ້ ແລະທີ່ດິນປ່າໄມ້ໃດໜຶ່ງ ທີ່ຈະກຳນົດເປັນເຂດປ່າປ້ອງກັນ ຕ້ອງມີບາງເງື່ອນໄຂ ດັ່ງນີ້:

1. ພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ລວມເອົາ ເຂດປ່າສະຫງວນ, ເຂດປ່າຜະລິດແຫ່ງຊາດ;
2. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ທີ່ມີເນື້ອທີ່ຢ່າງໜ້ອຍ 0,5 ເຮັກຕາ (ເຄິ່ງເຮັກຕາ);

3. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ຢູ່ລຽບຕາມຊາຍແດນ ລະຫວ່າງປະເທດ ນັບຈາກຊາຍແດນເຂົ້າມາຢ່າງໜ້ອຍ 05 ກິໂລແມັດ (ຫ້າກິໂລແມັດ);
4. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ທີ່ກຳນົດເປັນປ່າປ້ອງກັນມົນລະພິດທາງອາກາດ, ເຂດປ່າໄມ້ທີ່ກຳນົດໄວ້ເພື່ອການຄົ້ນຄ້ວາ, ສວນພຶກສາດ, ເພື່ອການພັກຜ່ອນ, ປ່າໄມ້ຢູ່ໃນ ແລະອ້ອມຕົວເມືອງ, ເທດສະບານ, ຊານເມືອງ, ປ່າຊົມໃຊ້, ປ່າສັກສິດ, ປ່າຊ້າຂອງບ້ານ ແລະອື່ນໆ;
5. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ທີ່ກຳນົດເປັນເຂດປ່າຍອດນ້ຳ, ແຫລ່ງນ້ຳ, ອ່າງຮັບນ້ຳ ຫລືອ່າງໂຕ່ງເຂດປ່າໂຄກ, ເຂດປ່າໄມ້ ແລະທີ່ດິນປ່າໄມ້ ທີ່ມີຄວາມຄ້ອຍຊັນສູງ ແຕ່ 35 ອົງສາຂຶ້ນໄປ;
6. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ທີ່ກຳນົດ ເປັນປ່າແຄມແມ່ນ້ຳ, ສາຍຫ້ວຍ ເບື້ອງລະຢ່າງໜ້ອຍ 50 ແມັດ (ຫ້າສິບແມັດ)ຂຶ້ນໄປ;
7. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ທີ່ກຳນົດເປັນປ່າແຄມທາງ ລວມທັງປ່າໄມ້ທີ່ມີຢູ່ໃນ ເຂດສະຫງວນຂອງທາງ ຊຶ່ງນັບແຕ່ແຄມທາງອອກໄປເບື້ອງລະ 50 ແມັດ (ຫ້າສິບແມັດ)ຂຶ້ນໄປ.
8. ພື້ນທີ່ປ່າໄມ້ແລະທີ່ດິນປ່າໄມ້ ທີ່ນອນຢູ່ໃນເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພື້ນທີ່ຢູ່ລຽບຕາມຊາຍແດນລະຫວ່າງປະເທດ,ເຂດປ້ອງກັນໄພທຳມະຊາດ, ປ້ອງກັນສິ່ງແວດລ້ອມ, ເຂດທີ່ມີຄວາມສຳຄັນ ທາງດ້ານປະຫວັດສາດ ແລະວັດທະນະທຳ-ສັງຄົມ;
9. ພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ ຊຶ່ງມີຂອບເຂດຊາຍແດນຢ່າງຊັດເຈນ ເປັນຕົ້ນແມ່ນສັນປັນນ້ຳ (ສັນພູ), ສາຍນ້ຳ ແລະເສັ້ນທາງ. ໃນກໍລະນີ ບໍ່ມີເຂດແດນທຳມະຊາດ ກໍຕ້ອງໄດ້ ປັກຫລັກໝາຍເພື່ອໃຫ້ແທດເໝາະ ກັບສະພາບຄວາມເປັນຈິງຂອງພື້ນທີ່.

**ມາດຕາ 9. ຂັ້ນຕອນການກຳນົດຂອບເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ**

ການກຳນົດຂອບເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ກຳນົດຂອບເຂດເບື້ອງຕົ້ນ ໃນແຜນທີ່ພູມີປະເທດ ແລະຂໍ້ມູນການປ່ຽນແປງ ຄວາມປົກຫຸ້ມປ່າໄມ້ ຈາກການແປພາບຖ່າຍດາວທຽມ ຫລືພາບຖ່າຍທາງອາກາດ;
2. ສົມທົບກັບອົງການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ ເພື່ອເປັນເອກະພາບ ກ່ຽວກັບການກຳນົດຂອບເຂດ ແລະສ້າງນິຕິກຳຮອງຮັບ;
3. ສ້າງແຜນທີ່ຂອບເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ແລ້ວນຳສະເໜີລັດຖະບານພິຈາລະນາຮັບຮອງ;
4. ນຳສະເໜີຕໍ່ອົງການຄຸ້ມຄອງທີ່ດິນແຫ່ງຊາດ ອອກໃບຕາດິນ.

**ມາດຕາ 10. ການຢັ້ງຢືນຂອບເຂດ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ**

ການຢັ້ງຢືນຂອບເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ຕ້ອງໄດ້ຜ່ານການເຫັນດີ ໂດຍອົງການປົກຄອງຂັ້ນຕ່າງໆ ດັ່ງນີ້:

1. ຂອບເຂດປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນລະດັບຊາດ ຫລືລະດັບແຂວງ, ນະຄອນ ທີ່ໄດ້ກຳນົດຂຶ້ນຢູ່ແຂວງ, ນະຄອນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນເປັນຜູ້ຢັ້ງຢືນຮັບຮູ້ ຕາມການສະເໜີ

ຂອງ ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ໂດຍເປັນເອກະພາບກັບພະແນກ ກະສິກຳ ແລະປ່າໄມ້ແຂວງ, ນະຄອນ;

2. ຂອບເຂດປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນລະດັບເມືອງ, ເທດສະບານ ທີ່ໄດ້ກຳນົດຂຶ້ນຢູ່ໃນເມືອງ ຫລືເທດສະບານ ແມ່ນເຈົ້າເມືອງ ຫລືຫົວໜ້າເທດສະບານ ເປັນຜູ້ຢັ້ງຢືນຮັບຮູ້ ຕາມການສະເໜີຂອງ ອົງການຄຸ້ມຄອງທີ່ດິນປະຈຳເມືອງ ຫລືເທດສະບານ ໂດຍເປັນເອກະພາບກັບຫ້ອງການກະສິກຳ ແລະປ່າໄມ້ເມືອງ ຫລືເທດສະບານ;
3. ຂອບເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບບ້ານ ທີ່ໄດ້ກຳນົດຂຶ້ນຢູ່ໃນບ້ານ ແມ່ນນາຍບ້ານເປັນຜູ້ຢັ້ງຢືນຮັບຮູ້ ຕາມການສະເໜີຂອງໜ່ວຍງານຄຸ້ມຄອງທີ່ດິນປະຈຳບ້ານ, ໂດຍເປັນເອກະພາບ ກັບໜ່ວຍງານປ່າໄມ້ບ້ານ.

**ມາດຕາ 11. ການຮັບຮອງ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ**

ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ທີ່ໄດ້ຢັ້ງຢືນ ຕາມມາດຕາ 10 ຂອງດຳລັດສະບັບນີ້ ຕ້ອງໄດ້ປະກາດຢ່າງເປັນທາງການດັ່ງນີ້:

1. ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບຊາດ ທີ່ມີຂອບເຂດເນື້ອທີ່ແຕ່ 50.000(ຫ້າສິບພັນ)ເຮັກຕາຂຶ້ນໄປ ຊຶ່ງອາດກວມເອົາຫລາຍແຂວງ, ນະຄອນ ແມ່ນສະພາແຫ່ງຊາດ ເປັນຜູ້ພິກລິງຮັບຮອງ ຕາມການ ສະເໜີຂອງ ລັດຖະບານ.

   ກໍລະນີປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບຊາດ ທີ່ມີເນື້ອທີ່ຕ່ຳກວ່າ 50.000(ຫ້າສິບພັນ)ເຮັກຕາ ແຕ່ກວມເອົາຫລາຍແຂວງ, ນະຄອນ ຫຼືຢູ່ໃນແຂວງ, ນະຄອນ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ພິກລິງຮັບຮອງ ຕາມການສະເໜີຂອງລັດຖະບານ;
2. ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບແຂວງ, ນະຄອນ ທີ່ມີຂອບເຂດເນື້ອທີ່ກວມເອົາຫລາຍເມືອງແມ່ນລັດຖະບານເປັນຜູ້ຮັບຮອງ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍເປັນເອກະພາບກັບ ກະຊວງກະສິກຳ ແລະປ່າໄມ້;

   ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບແຂວງ, ນະຄອນ ທີ່ບໍ່ກວມເອົາຫຼາຍເມືອງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ຮັບຮອງ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ໂດຍເປັນເອກະພາບກັບ ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ ;
3. ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບເມືອງ, ເທດສະບານ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ຮັບຮອງ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ໂດຍການເປັນເອກະພາບກັບ ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ;
4. ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບບ້ານ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ຮັບຮອງ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນປະຈຳເມືອງ, ເທດສະບານ ໂດຍເປັນເອກະພາບ ກັບຫ້ອງການກະສິກຳ ແລະປ່າໄມ້ເມືອງ, ເທດສະບານ.

## ໝວດທີ III
## ກິດຈະການປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

### ມາດຕາ 12. ກິດຈະການ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ການຄຸ້ມຄອງປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ປະກອບດ້ວຍ ກິດຈະການຕ່າງໆເຊັ່ນ: ການສຳຫລວດ, ການວາງແຜນຈັດສັນ, ການຄົ້ນຄວ້າທົດລອງ, ການປົກປັກຮັກສາ, ການພັດທະນາ, ການຫັນປ່ຽນປ່າປ້ອງກັນ, ການນຳໃຊ້ຜະລິດຕະພັນປ່າໄມ້ ແລະການກວດກາລາດຕະເວນ.

### ມາດຕາ 13. ການສຳຫລວດ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ການສຳຫຼວດປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ໃຫ້ປະຕິບັດດັ່ງນີ້:

1. ເກັບກຳຂໍ້ມູນ, ຕີລາຄາສະພາບປ່າໄມ້, ຄວາມປົກຫຸ້ມປ່າໄມ້, ການປ່ຽນແປງການນຳໃຊ້ປ່າໄມ້, ຊະນິດພັນໄມ້, ບໍລິມາດໄມ້, ໄມ້ສືບພັນ, ເຄື່ອງປ່າຂອງດົງ, ຊີວະນາໆພັນ, ສະພາບພື້ນທີ່, ແຫລ່ງນ້ຳ, ສະພາບເສດຖະກິດ-ສັງຄົມ ແລະອື່ນໆ;
2. ກຳນົດຂອບເຂດ, ການປັກຫລັກໝາຍແລະການຈັດແບ່ງເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
3. ສ້າງແຜ່ນທີ່ ນຳໃຊ້ທີ່ດິນປ່າປ້ອງກັນ.

### ມາດຕາ 14. ການວາງແຜນຈັດສັນປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

ການວາງແຜນຈັດສັນປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ແມ່ນການກຳນົດພື້ນທີ່ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ ຈາກການສຳຫລວດຕົວຈິງ, ການວາງແຜນຈັດສັນ ໃຫ້ດຳເນີນຕາມຫລັກການ ຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ຍຸດທະສາດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຍຸດທະສາດປ່າໄມ້ ແລະແຜນການນຳໃຊ້ທີ່ດິນປ່າໄມ້;
2. ຮັບປະກັນຄວາມເປັນເອກະພາບ ໃນການວາງແຜນປົກປັກຮັກສາ ແລະພັດທະນາປ່າປ້ອງກັນແບບ ຍືນຍົງ;
3. ຮັບປະກັນ ການນຳໃຊ້ຜະລິດຕະພັນປ່າໄມ້ແບບຍືນຍົງ, ບໍ່ບົກແຫ້ງ, ບໍ່ກະທົບເຖິງໂຄງສ້າງຂອງປ່າໄມ້, ຮັບປະກັນການສືບພັນໄມ້ ແລະເຄື່ອງປ່າຂອງດົງ ຕາມທຳມະຊາດ;
4. ຮັບປະກັນ ການປົກປັກຮັກສາແຫລ່ງນ້ຳ, ຊີວະນາໆພັນໃຫ້ອຸດົມສົມບູນ ລວມທັງການປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 15. ການຄົ້ນຄວ້າທົດລອງ

ລັດ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງດຳເນີນການສຶກສາ, ຄົ້ນຄວ້າ, ທົດລອງທາງດ້ານວິຊາການໃນເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ເພື່ອຊອກຫາຮູບແບບ ແລະມາດຕະຖານເຕັກນິກ ເຊັ່ນ: ການສຶກສາຮູບແບບຟື້ນຟູປ່າໄມ້, ການດູດຊັບທາດກາກໂບນິກ($CO_2$) ຈັດສັນ

ແຫລ່ງແກ່ນພັນໄມ້ພື້ນເມືອງ, ພັນພືດ, ຊະນິດພັນໄມ້ທຳມະຊາດ, ຈັດສັນແຫລ່ງນ້ຳ, ສັດນ້ຳ, ສັດປ່າ, ການຕົກຕະກອນຂອງດິນ, ສິ່ງເສດເຫລືອຕ່າງໆ ແລະອື່ນໆ ຕາມລະບຽບຫລັກການ.

### ມາດຕາ 16. ການປົກປັກຮັກສາ

ການປົກປັກຮັກສາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ແມ່ນການຮັກສາແຫລ່ງນ້ຳ, ປ້ອງກັນການເຊາະເຈື່ອນ ແລະຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະອື່ນໆ. ວາງແຜນຈັດສັນ ແລະກຳນົດມາດຕະການຄຸ້ມຄອງ ເພື່ອສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ ຫລືພວມເກີດຂຶ້ນ ຊຶ່ງເປັນສາເຫດເຮັດໃຫ້ທີ່ດິນປ່າປ້ອງກັນມີການເຊາະເຈື່ອນ, ດິນເຊື່ອມຄຸນນະພາບ, ການປ່ຽນແປງລະບົບນິເວດຂອງດິນບໍລິເວນນ້ຳ, ແຫລ່ງນ້ຳບົກແຫ້ງ, ການກະທົບເຂດຍຸດທະສາດ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະສິ່ງແວດລ້ອມ.

ສຳລັບປ່າໄມ້ ໃນຂອບເຂດບ້ານຮັບຜິດຊອບນັ້ນ ໄດ້ຈັດແບ່ງອອກເປັນສາມປະເພດປ່າໄມ້ ຄື: ປ່າປ້ອງກັນຂອງບ້ານ ລວມມີ ປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງ. ປ່າສະຫງວນຂອງບ້ານ ລວມມີ ປ່າສັກສິດ, ປ່າຊ້າ ແລະ ປ່າຊົມໃຊ້ຂອງບ້ານ. ນອກນັ້ນ ຍັງມີເຂດທີ່ດິນເປົ່າຫວ່າງທີ່ໄດ້ກຳນົດເປັນເຂດຜະລິດ.

### ມາດຕາ 17. ການນຳໃຊ້ປ່າໄມ້, ຜະລິດຕະພັນປ່າໄມ້ ແລະ ທີ່ດິນປ່າໄມ້

ການນຳໃຊ້ປ່າໄມ້ ແລະຜະລິດຕະພັນປ່າໄມ້ ໃນເຂດຄຸ້ມຄອງນຳໃຊ້ປ່າປ້ອງກັນ ແມ່ນອະນຸຍາດໃຫ້ນຳໃຊ້ສະເພາະແຕ່ໄມ້ ແລະຜະລິດຕະພັນປ່າໄມ້ ປະເພດບໍ່ຫວງຫ້າມ, ເກັບກູ້ເຄື່ອງປ່າຂອງດົງ, ຕົ້ນໄມ້ ແລະພືດທີ່ເປັນຢາ,ໄມ້ໃຊ້ສອຍພາຍໃນຄອບຄົວຕາມປະເພນີ. ແຕ່ຕ້ອງປະຕິບັດຕາມແຜນຈັດສັນ, ລະບຽບການ ກ່ຽວກັບປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ, ລະບຽບກົດໝາຍກ່ຽວກັບປ່າໄມ້ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ໂຄງສ້າງຂອງປ່າໄມ້.

ການນຳໃຊ້ທີ່ດິນເຂດຄຸ້ມຄອງນຳໃຊ້ປ່າປ້ອງກັນ ແມ່ນອະນຸຍາດໃຫ້ນຳໃຊ້ສະເພາະ ແຕ່ເພື່ອການທ່ອງທ່ຽວທຳມະຊາດ, ສະຖານທີ່ພັກຜ່ອນ ຕາມເຂດທີ່ຈັດສັນໃຫ້.

### ມາດຕາ 18. ການພັດທະນາ ແລະຟື້ນຟູ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

ການພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ແມ່ນທຸກການເຄື່ອນໄຫວເພື່ອເຮັດໃຫ້ປ່າໄມ້ ແລະທີ່ດິນປ່າໄມ້ ໃນເຂດປ່າປ້ອງກັນທີ່ຊຸດໂຊມໃຫ້ອຸດົມສົມບູນຂຶ້ນ ດ້ວຍການບູລະນະເຂດ ປ່າໄມ້ຊຸດໂຊມ, ປ່າເຫລົ່າ, ພື້ນທີ່ປ່າປອກໂຫລັ້ນ, ທີ່ດິນຊຸດໂຊມ ດ້ວຍຮູບການຟື້ນຟູປ່າແບບ ທຳມະຊາດ, ປູກໄມ້ເສີມ, ປັບແປງດິນຄືນ ຫລັງການຂຸດຄົ້ນແຮ່ທາດ, ປູກໄມ້ ແລະພືດຄຸມໜ້າດິນໂດຍການນຳໃຊ້ຊະນິດພັນໄມ້ພື້ນເມືອງ ຫລືພັນໄມ້ທີ່ມີໃນທ້ອງຖິ່ນ ລວມທັງເຄື່ອງປ່າຂອງດົງ ດ້ວຍການນຳໃຊ້ມາດຕະຖານດ້ານເຕັກນິກ ແລະວິທະຍາສາດທີ່ເໝາະສົມ ເພື່ອເຮັດໃຫ້ສະພາບປ່າໄມ້ແລະ ທີ່ດິນປ່າໄມ້

ໃນເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ມີຄວາມອຸດົມສົມບູນດີຂຶ້ນ, ມີມູນຄ່າສູງ ແລະ ສົມດູນ ກັບລະບົບນິເວດຂອງປ່າໄມ້.

**ມາດຕາ 19. ການຫັນປ່ຽນປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ**

ໃນກໍລະນີຈໍາເປັນມີການຫັນປ່ຽນປ່າປ້ອງກັນໄປຮັບໃຊ້ເປົ້າໝາຍອື່ນທີ່ມີຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດນັ້ນໃຫ້ປະຕິບັດ ດັ່ງນີ້:

1. ການຫັນປ່ຽນປ່າປ້ອງກັນລະດັບຊາດ ແລະປ່າປ້ອງກັນລະດັບແຂວງ ຕ້ອງໄດ້ຮັບຮອງຈາກ ຄະນະປະຈໍາສະພາແຫ່ງຊາດ ຕາມການສະເໜີຂອງ ລັດຖະບານ;
2. ການຫັນປ່ຽນປ່າປ້ອງກັນລະດັບເມືອງ, ເທດສະບານ ຕ້ອງໄດ້ຮັບຮອງຈາກລັດຖະບານ ຕາມການສະເໜີຂອງ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍການເຫັນດີເປັນເອກະພາບກັບ ກະຊວງກະສິກໍາ ແລະປ່າໄມ້;
3. ການຫັນປ່ຽນປ່າປ້ອງກັນລະດັບບ້ານ ຕ້ອງໄດ້ຮັບຮອງຈາກອົງການປົກຄອງແຂວງ, ນະຄອນ ຕາມການສະເໜີຂອງ ອົງການຄຸ້ມຄອງທີ່ດິນປະຈໍາແຂວງ, ນະຄອນ ໂດຍການເຫັນດີເປັນເອກະພາບກັບ ພະແນກກະສິກໍາ ແລະປ່າໄມ້ແຂວງ, ນະຄອນ.

**ມາດຕາ 20. ການກວດກາ ລາດຕະເວນ**

ອົງການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ມີໜ້າທີ່ດໍາເນີນການກວດກາລາດຕະເວນໃນເຂດປ່າປ້ອງກັນ ເພື່ອສະກັດກັ້ນການບຸກລຸກທໍາລາຍປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນເຊັ່ນ: ຖາງປ່າເຮັດໄຮ່, ການລັກລອບຕັດໄມ້ທໍາລາຍປ່າ, ການບຸກເບີກເນື້ອທີ່ດິນປ່າປ້ອງກັນ, ການລ່າ, ການຄ້າ-ຂາຍສັດປ່າ, ເຄື່ອງປ່າຂອງດົງ ແລະກິດຈະກໍາອື່ນໆ ທີ່ລະເມີດລະບຽບກົດໝາຍ. ໃນກໍລະນີມີຄວາມຈໍາເປັນ ຕ້ອງໄດ້ສ້າງຕັ້ງດ່ານກວດກາ ຢູ່ພາຍໃນເຂດປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ.

## ໝວດທີ IV
## ການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

ມາດຕາ 21. ການຄຸ້ມຄອງປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນຈັດຕັ້ງໜ່ວຍງານສະເພາະ ເພື່ອຮັບຜິດຊອບຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນຢູ່ໃນແຕ່ລະແຂວງ. ໂດຍປະກອບພະນັກງານວິຊາການ ຢ່າງໜ້ອຍ 20ຄົນ ພ້ອມທັງປະກອບເຄື່ອງມື, ອຸປະກອນ, ພາຫະນະ ແລະຈັດສັນງົບປະມານ ຮັບໃຊ້ການເຄື່ອນໄຫວ ໂດຍຖືເອົາກໍາລັງຂອງປະຊາຊົນເປັນຕົ້ນຕໍ ໃນການດໍາເນີນການຈັດຕັ້ງປະຕິບັດວຽກງານ.

**ມາດຕາ 22. ການແບ່ງຂັ້ນຄຸ້ມຄອງ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນລະດັບຊາດ.

ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ລະດັບແຂວງ, ນະຄອນ.

ຫ້ອງການກະສິກຳ ແລະປ່າໄມ້ເມືອງ, ເທດສະບານ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບເມືອງ, ເທດສະບານ.

ໜ່ວຍງານປ່າໄມ້ບ້ານ ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລະອົງການຈັດຕັ້ງຕ່າງໆພາຍໃນບ້ານ, ກຸ່ມບ້ານ ໃນການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນລະດັບບ້ານ.

**ມາດຕາ 23. ອົງການຄຸ້ມຄອງປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ**

ລັດຖະບານ ຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນຢ່າງລວມສູນ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະປ່າໄມ້ ເປັນໃຈກາງປະສານສົມທົບກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ, ອົງການຊັບພະຍາກອນນ້ຳ ແລະສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະຂົນສົ່ງ, ອົງການທ່ອງທ່ຽວແຫ່ງຊາດ, ອົງການປົກຄອງທ້ອງຖິ່ນ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະປ່າໄມ້ ໂດຍແມ່ນກົມປ່າໄມ້ເປັນເສນາທິການ;
2. ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ;
3. ຫ້ອງການກະສິກຳ ແລະປ່າໄມ້ ເມືອງ, ເທດສະບານ;
4. ໜ່ວຍງານປ່າໄມ້ບ້ານ.

**ມາດຕາ 24. ສິດ ແລະໜ້າທີ່ ຂອງກະຊວງກະສິກຳ ແລະປ່າໄມ້**

ໃນການຄຸ້ມຄອງປ່າປ້ອງກັນ, ທີ່ດິນປ່າປ້ອງກັນ ກະຊວງກະສິກຳ ແລະປ່າໄມ້ ມອບໃຫ້ກົມປ່າໄມ້ເປັນຜູ້ຈັດຕັ້ງປະຕິບັດ ຊຶ່ງມີສິດ ແລະໜ້າທີ່ ດັ່ງນີ້ :

1. ຜັນຂະຫຍາຍ ແລະໂຄສະນາເຜີຍແຜ່ແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍ, ນະໂຍບາຍຕ່າງໆ ແລະບົດບັນຍັດຂອງ ບັນດາສົນທິສັນຍາສາກົນ ທີ່ກ່ຽວຂ້ອງຊຶ່ງ ສປປ ລາວ ເປັນພາຄີ ໃຫ້ກາຍເປັນ ແຜນງານ, ໂຄງການລະອຽດ ເພື່ອປົກປັກຮັກສາ ແລະພັດທະນາ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໃນຂອບເຂດທົ່ວປະເທດ;
2. ກຳນົດຫຼັກການ, ລະບຽບການ, ຄຳສັ່ງ, ຄຳແນະນຳ ທີ່ສອດຄ່ອງກັບ ລະບຽບກົດໝາຍ ກ່ຽວກັບປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;

3. ໂຄສະນາເຜີຍແຜ່, ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ລະບຽບກົດໝາຍ ກ່ຽວກັບປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ແລະບົດບັນຍັດຂອງ ບັນດາສົນທິສັນຍາສາກົນ ທີ່ກ່ຽວຂ້ອງຊຶ່ງ ສປປ ລາວ ເປັນພາຄີ.
4. ຄົ້ນຄວ້າ ວິທະຍາສາດເຕັກນິກ ດ້ານປ່າປ້ອງກັນ, ສ້າງຕາໜ່າງ ສູນສະຖິຕິ ແລະຂ່າວສານ, ບຳລຸງ ແລະຍົກລະດັບ ວິຊາການປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
5. ປະສານສົມທົບ ກັບອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນເປັນຕົ້ນ ການສຳຫລວດ, ການວາງແຜນຈັດສັນ, ການອະນຸມັດນຳໃຊ້;
6. ພົວພັນ ແລະຮ່ວມມື ກັບຕ່າງປະເທດ ກ່ຽວກັບກິດຈະການປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
7. ສະຫລຸບ, ລາຍງານຜົນການຈັດຕັ້ງປະຕິບັດ ວຽກງານປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໃນທົ່ວປະເທດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 25. ສິດ ແລະໜ້າທີ່ ຂອງພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ**

ໃນການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນພະແນກກະສິກຳແລະປ່າໄມ້ແຂວງ,ນະຄອນ ມອບໃຫ້ກອງຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນເປັນຜູ້ຈັດຕັ້ງປະຕິບັດ ຊຶ່ງມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ມະຕິຄຳສັ່ງ ແລະລະບຽບການ ກ່ຽວກັບການຄຸ້ມຄອງ ແລະນຳໃຊ້ປ່າປ້ອງກັນ ແລະທີ່ດິນປ່າປ້ອງໃນຂອບເຂດ ຄວາມຮັບຜິດຊອບຂອງຕົນແລ້ວ ຈັດຕັ້ງປະຕິບັດ;
2. ໂຄສະນາເຜີຍແຜ່ ລະບຽບກົດໝາຍ, ປະສານສົມທົບ ແລະຮ່ວມມື ໃນການຈັດຕັ້ງປະຕິບັດພັນສາກົນພາຍໃຕ້ບັນດາສົນທິສັນຍາສາກົນ ທີ່ກ່ຽວຂ້ອງ ກ່ຽວກັບປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງ, ເທດສະບານ;
4. ຄົ້ນຄວ້າ ແລະມີຄຳເຫັນ ກ່ຽວກັບການຂໍອະນຸມັດນຳໃຊ້ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ເພື່ອສະເໜີຕໍ່ ກະຊວງກະສິກຳ ແລະປ່າໄມ້ ພິຈາລະນາ;
5. ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ເປັນຕົ້ນ ການສຳຫລວດ, ການຈັດສັນ, ການອະນຸມັດນຳໃຊ້;
6. ສະຫລຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານປ່າປ້ອງກັນ ພາຍໃນແຂວງ, ນະຄອນ ໃຫ້ກະຊວງກະສິກຳ ແລະປ່າໄມ້ ແລະອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ**

ໃນການຄຸ້ມຄອງປ່າປ້ອງກັນ, ທີ່ດິນປ່າປ້ອງກັນ ຫ້ອງການກະສິກຳ ແລະປ່າໄມ້ເມືອງ, ເທດສະບານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ບັນດາແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ກ່ຽວກັບການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
2. ໂຄສະນາ ເຜີຍແຜ່ລະບຽບກົດໝາຍກ່ຽວກັບປ່າໄມ້;
3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດວຽກງານຂອງໜ່ວຍງານປ່າໄມ້ບ້ານ ເປັນຕົ້ນ ການປົກປັກຮັກສາ, ພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
4. ຈັດຕັ້ງປະຊາຊົນຢູ່ຂັ້ນບ້ານຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາປ່າປ້ອງກັນ ແລະທີ່ດິນ ປ່າປ້ອງກັນ;
5. ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ພາຍໃນເມືອງ, ເທດສະບານໃຫ້ພະແນກ ກະສິກຳ ແລະປ່າໄມ້ແຂວງ, ນະຄອນ ແລະອົງການປົກຄອງເມືອງ, ເທດສະບານ ຢ່າງເປັນ ປົກກະຕິ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 27. ສິດ ແລະ ໜ້າທີ່ ຂອງໜ່ວຍງານ ປ່າໄມ້ບ້ານ**

ໃນການຄຸ້ມຄອງປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນໜ່ວຍງານປ່າໄມ້ບ້ານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະສະເໜີໃຫ້ອົງການປົກຄອງບ້ານ ອອກກົດລະບຽບນຳໃຊ້ປ່າໄມ້, ປ່າປ້ອງກັນ ແລະທີ່ ດິນປ່າປ້ອງກັນຂອງຂັ້ນບ້ານຕົນ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍ ກ່ຽວກັບປ່າໄມ້;
2. ເຜີຍແຜ່ຄວາມຮູ້, ລະບຽບການກ່ຽວກັບປ່າໄມ້, ເປັນຕົ້ນ ຄວາມສຳຄັນ ແລະຄຸນປະໂຫຍດຂອງ ປ່າໄມ້, ທີ່ດິນປ່າໄມ້, ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ, ປ່າຍອດນ້ຳ ແລະສິ່ງແວດລ້ອມ ໃຫ້ ປະຊາຊົນ ໃນບ້ານຂອງຕົນ;
3. ຈັດຕັ້ງປະຕິບັດມະຕິ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ ແລະລະບຽບກົດໝາຍ ກ່ຽວກັບປ່າໄມ້;
4. ຈັດຕັ້ງປະຊາຊົນຄຸ້ມຄອງ, ປົກປັກຮັກສາປ່າປ້ອງກັນ, ປ່າສະຫງວນຂອງບ້ານ ແລະການປ້ອງກັນ ໄຟປ່າ. ກຳນົດ ແລະວາງແຜນການພັດທະນາ ເປັນຕົ້ນແມ່ນການຟື້ນຟູ, ການປູກ, ການເສີມ ຂະຫຍາຍປ່າ, ການຮັກສາພໍ່-ແມ່ພັນໄມ້, ການເກັບແກ່ນ, ການກ້າເບ້ຍ, ແລະ ການນຳໃຊ້ ປ່າໄມ້ ແລະເຄື່ອງປ່າຂອງດົງ ໃນປ່າຊົມໃຊ້ຂອງບ້ານແບບຍືນຍົງ ໃຫ້ຖືກຕ້ອງກັບສະພາບຕົວຈິງ ຂອງ ບ້ານຕົນ;
5. ຕິດຕາມ, ເກັບກຳສະພາບ ການປ່ຽນແປງ ຂອງປ່າໄມ້, ສິ່ງແວດລ້ອມ ແລະສະພາບການເຄື່ອນ ໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານ ໃຫ້ຫ້ອງການກະສິກຳ ແລະປ່າໄມ້ ເມືອງ, ເທດສະບານ;

6. ເປັນເຈົ້າການຕິດຕາມ, ສະກັດກັ້ນ ແລະຕ້ານການເຄື່ອນໄຫວອັນບໍ່ດີທີ່ມີ ຜົນກະທົບຕໍ່ປ່າປ້ອງກັນ ເຄື່ອງປ່າຂອງດົງ ແລະສິ່ງແວດລ້ອມ ເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະການກະທຳ ທີ່ເປັນການທຳລາຍປ່າໄມ້ ຢ່າງທັນການ;
7. ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ພາຍໃນບ້ານ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ແລະອົງການປົກຄອງບ້ານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ V
## ຜົນປະໂຫຍດ ແລະ ພັນທະຂອງຜູ້ນຳໃຊ້ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

### ມາດຕາ 28. ຜົນປະໂຫຍດ ຈາກປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ສາມາດຕອບສະໜອງ ຜົນປະໂຫຍດ ທາງກົງ ແລະ ທາງອ້ອມ ໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ ແລະການປົກປັກຮັກສາສິ່ງແວດລ້ອມທຳມະຊາດ ເປັນຕົ້ນ ການຮັກສາຍອດນ້ຳ, ຮັກສາແຫລ່ງນ້ຳ ໃຫ້ແກ່ການຊົມໃຊ້ນ້ຳ, ການຜະລິດກະແສໄຟຟ້າດ້ວຍພະລັງນ້ຳ, ການຊົນລະປະທານ ແລະກະສິກຳ, ຮັກສາລະບົບນິເວດທາງທຳມະຊາດ, ການສຶກສາຄົ້ນຄວ້າ, ຄວາມຫລາກຫລາຍທາງດ້ານຊີວະນາໆພັນ, ຮັກສາຄຸນນະພາບຂອງດິນ, ຕ້ານການເຊາະເຈື່ອນຂອງດິນ, ປ້ອງກັນໄພທຳມະຊາດ, ເຂດຍຸດທະສາດເພື່ອປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ແຫລ່ງທ່ອງທ່ຽວທຳມະຊາດ, ຮອງຮອຍປະຫວັດສາດ, ວັດທະນະທຳ ແລະອື່ນໆ.

### ມາດຕາ 29. ພັນທະ ຂອງຜູ້ນຳໃຊ້ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ ປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ໂດຍທາງກົງ ຫລືທາງອ້ອມ ຕ້ອງປະຕິບັດພັນທະ ໃນການປົກປັກຮັກສາ ແລະພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ ດັ່ງນີ້:

1. ປະຕິບັດຕາມນະໂຍບາຍ ແລະລະບຽບກົດໝາຍ ກ່ຽວກັບປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ;
2. ປູກ, ຟື້ນຟູບູລະນະ ແລະພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນໃຫ້ອຸດົມສົມບູນຕະຫລອດໄປ;
3. ປົກປັກຮັກສາ ສິ່ງແວດລ້ອມ, ຍອດນ້ຳ, ແຫລ່ງນ້ຳ, ເຄື່ອງປ່າຂອງດົງ, ສັດນ້ຳ ແລະສັດປ່າ;
4. ໃນກໍລະນີ ມີການຂຸດຄົ້ນແຮ່ທາດ, ສ້າງເສັ້ນທາງ, ສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ, ກິດຈະການທ່ອງທ່ຽວ ຫລືໂຄງການພັດທະນາອື່ນໆ ຕ້ອງປະກອບສ່ວນທຶນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາປ່າປ້ອງກັນ, ທີ່ດິນປ່າປ້ອງກັນ ແລະປົວແປງສິ່ງແວດລ້ອມ ໃນເຂດດັ່ງກ່າວ;
5. ເສຍຄ່າ ຊັບພະຍາກອນປ່າໄມ້, ຄ່າທຳນຽມອື່ນໆ ຕາມລະບຽບກົດໝາຍ;

6. ປຸກລະດົມ ລົບຂວາຍທຶນຮອນ ທັງພາຍໃນ ແລະຕ່າງປະເທດ ເຂົ້າໃນກອງທຶນ ພັດທະນາປ່າໄມ້ ແລະຊັບພະຍາກອນປ່າໄມ້;
7. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບຂະແໜງການທີ່ກ່ຽວຂ້ອງ;
8. ປະກອບສ່ວນ ແລະ ເປັນເຈົ້າການ ໃນການຕ້ານ ແລະສະກັດກັ້ນ ການທຳລາຍປ່າ, ລັກລອບຂຸດຄົ້ນໄມ້ ແລະເຄື່ອງປ່າຂອງດົງ, ການລັກລອບລ່າ ສັດນ້ຳ ແລະສັດປ່າ, ປ້ອງກັນໄຟໄໝ້ລາມປ່າ ໃນເຂດປ່າປ້ອງກັນ;
9. ປະຕິບັດ ພັນທະອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ VI
## ແຫລ່ງທຶນ ແລະການປະຕິບັດພັນທະ
## ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນ

### ມາດຕາ 30. ແຫລ່ງທຶນ

ແຫລ່ງທຶນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນໄດ້ມາຈາກ ແຫລ່ງທຶນຕົ້ນຕໍ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນພັດທະນາປ່າໄມ້ ແລະຊັບພະຍາກອນປ່າໄມ້ ຕາມດຳລັດນາຍົກລັດຖະມົນຕີ ເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005;
3. ກອງທຶນຕ່າງໆເປັນຕົ້ນ: ກອງທຶນບູລະນະ ແລະປົກປັກຮັກສາທາງຫຼວງ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະກອງທຶນອື່ນໆ ທັງພາຍໃນ ແລະຕ່າງປະເທດ;
4. ໂຄງການນຳໃຊ້ ຊັບພະຍາກອນທຳມະຊາດທີ່ກ່ຽວຂ້ອງ ໂດຍທາງກົງ ແລະ ທາງອ້ອມ;
5. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່, ການຈັດຕັ້ງ, ອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະອື່ນໆ.

### ມາດຕາ 31. ການປະຕິບັດພັນທະຂອງບັນດາໂຄງການ

ບັນດາໂຄງການ ທີ່ໄດ້ສິ່ງຜົນກະທົບ ແລະໄດ້ຮັບຜົນປະໂຫຍດ ຈາກປ່າປ້ອງກັນ ແລະທີ່ດິນ ປ່າປ້ອງກັນທັງທາງກົງ ແລະທາງອ້ອມ ຕ້ອງໄດ້ປະກອບທຶນເຂົ້າກອງທຶນພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມທີ່ໄດ້ລະບຸໄວ້ໃນ ສັນຍາພັດທະນາໂຄງການ ເພື່ອນຳໃຊ້ເຂົ້າໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນດັ່ງນີ້:

1. ຜູ້ພັດທະນາໂຄງການ ຂຸດຄົ້ນແຮ່ທາດ ຕ້ອງໄດ້ປະກອບທຶນ ເຂົ້າໃນການປັບແປງທີ່ດິນ, ປູກຕົ້ນໄມ້ແທນຄືນ;

2. ຜູ້ພັດທະນາໂຄງການສ້າງເສັ້ນທາງ, ແລວສາຍໄຟຟ້າ ແລະໂຄງການພັດທະນາຕ່າງໆ ທີ່ມີການທັບປ່ຽນປ່າປ້ອງກັນ ແລະທີ່ດິນປ່າປ້ອງກັນແບບຖາວອນ ຕ້ອງໄດ້ປະກອບທຶນ ເຂົ້າໃນການຟື້ນຟູປ່າ ແລະປູກຕົ້ນໄມ້ທົດແທນຄືນ ຕາມຈຳນວນເນື້ອທີ່ ທີ່ຖືກກະທົບໂດຍກົງ;
3. ຜູ້ພັດທະນາໂຄງການ ເຂື່ອນໄຟຟ້າພະລັງນ້ຳ ຕ້ອງໄດ້ປະກອບທຶນ 1% (ໜຶ່ງສ່ວນຮ້ອຍ) ຂອງມູນຄ່າການຂາຍກະແສໄຟຟ້າທັງໝົດໃນແຕ່ລະປີ;
4. ຜູ້ປະກອບກິດຈະການ ດ້ານການທ່ອງທ່ຽວທຳມະຊາດ ຕ້ອງໄດ້ປະກອບທຶນ 1% (ໜຶ່ງສ່ວນຮ້ອຍ) ຂອງລາຍຮັບຈາກການທ່ອງທ່ຽວທຳມະຊາດ ໃນແຕ່ລະປີ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 32. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້, ອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະອົງການປົກຄອງທ້ອງຖິ່ນເປັນ ຜູ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະອົງການຈັດຕັ້ງຕ່າງໆຈົ່ງຮັບຮູ້ ແລະໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 33. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ແລະນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ